ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 0114/ທລຍ
12 FEB 2016

# ບົດສະຫຼຸບປະຈຳເດືອນ ມັງກອນ 2016
# ແລະ ແຜນວຽກເດືອນ ກຸມພາ 2016

ບົດລາຍງານສະບັບນີ້ ແມ່ນການສັງລວມຜົນການຈັດຕັ້ງປະຕິບັດວຽກງານ ທລຍ ໃນເດືອນ ມັງກອນ 2016 ທີ່ຜ່ານມາ ເຊິ່ງວຽກງານທີ່ພົ້ນເດັ່ນແມ່ນໄດ້ມີດັ່ງນີ້:

ໄດ້ລົງຢັ້ງຢາມໂຄງການຍ່ອຍ ໂດຍຄະນະບໍລິຫານໂຄງການ ທລຍ ນຳພາໂດຍຜູ້ອຳນວຍການບໍລິຫານ ແລະ ອົງການຮ່ວມມືການພັດທະນາປະເທດ ສະວິດເຊີແລນ (SDC) ທີ່ແຂວງ ຫຼວງນ້ຳທາ. ຈຸດປະສົງຂອງການຢັ້ງຢາມ ແມ່ນເພື່ອນຳພາຄະນະ (SDC) ຢັ້ງຢາມໂຄງການກໍ່ສ້າງນ້ຳລິນ ແລະ ການກໍ່ສ້າງໂຮງຮຽນ ທີ່ເມືອງລອງ ແລະ ເມືອງວຽງພູຄາ ເພື່ອເປັນການຕິດຕາມ ແລະ ປະເມີນຜົນໄດ້ຮັບຂອງຊຸມຊົນຈາກໂຄງການຍ່ອຍດັ່ງກ່າວ. ການຢັ້ງຢາມຄັ້ງນີ້ເຫັນເຖິງຜົນໄດ້ຮັບຕົວຈິງຂອງ ຊຸມຊົນທີ່ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນກຸ່ມເປົ້າໝາຍ ມີການປ່ຽນແປງທີ່ດີຂຶ້ນກວ່າເກົ່າຫຼາຍ ແລະ ຜູ້ໃຫ້ທຶນແມ່ນມີຄວາມຊົມເຊີຍຕໍ່ຜົນສຳເລັດດັ່ງກ່າວຂອງ ທລຍ.

ວຽກທີ່ພົ້ນເດັ່ນອີກອັນໜຶ່ງແມ່ນໄດ້ສັງລວມຕີລາຄາຜົນໄດ້ຮັບຕະຫຼອດ 13 ປີ. ຜົນໄດ້ຮັບຕະຫລອດໄລຍະ ການຈັດຕັ້ງປະຕິບັດ ວຽກງານຂອງ ທລຍ ຖືວ່າເປັນປັດໃຈນຶ່ງທີ່ສຳຄັນໃນການປະກອບສ່ວນເຂົ້າໃນວຽກງານ ພັດທະນາເສດຖະກິດສັງຄົມແຫ່ງ ສ ປ ປ ລາວ. ຕັ້ງແຕ່ປີ 2003-2015 ຖືວ່າເປັນເວລາຫລາຍກວ່າ 10 ປີທີ່ ທລຍ ໄດ້ປະຕິບັດໜ້າທີ່ອັນໜັກໜ່ວງສົມຄວນ ໃນການຊ່ວຍເຫລືອພໍ່ແມ່ປະຊາຊົນໃນເຂດທຸລະກັນດານຫ່າງໄກສອກຫລີກ ຕາມຄາດໝາຍສູ້ຊົນຂອງລັດຖະບານ ແລະ ປະຕິບັດຕາມລະບຽບຫລັກການຂອງຜູ້ໃຫ້ທຶນຢ່າງເຂັ້ມງວດ. ໃນຮອບວຽນ 12 ໄດ້ໃຫ້ການ ສະໜັບສະໜູນທັງໝົດ 1,426 ໂຄງການ ເຊິ່ງໄດ້ຈັດຕັ້ງປະຕິບັດສຳເລັດທັງໝົດແລ້ວ 1,381 ໂຄງການ.

ທລຍ ຍັງໄດ້ຕິດຕາມສັງລວມໂຄງການລ່າຊ້າທັງໝົດພາຍໃນຮອບວຽນ 9-12 ແລະ ເຫັນວ່າມີປະມານ 3% ຂອງໂຄງການທັງໝົດທີ່ຍັງລ່າຊ້າ. ສາຍເຫດຫຼັກໆຂອງຄວາມລ່າຊ້າກໍແມ່ນຍ້ອນ ຄວາມຫຍຸ້ງຍາກທາງດ້ານສະພາບ ອາກາດ ເຮັດໃຫ້ມີອຸປະສັກໃນການເຂົ້າເຖິງພື້ນທີ່ຈັດຕັ້ງປະຕິບັດໂຄງການ. ທລຍ ໄດ້ປະສານສົມທົບກັບອຳນາດການ

ປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງໃຫ້ຕິດຕາມໂຄງການດັ່ງກ່າວ ແລະ ຮີບຮ້ອນຈັດຕັ້ງປະຕິບັດໃຫ້ສໍາເລັດຢ່າງໄວທີ່ສຸດ.

ອີກໜຶ່ງວຽກງານທີ່ພົ້ນເດັ່ນແມ່ນ ການສັງລວມຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດ ຮອບວຽນ 13 ເຊິ່ງເປັນຮອບວຽນສຸດທ້າຍຂອງໂຄງການ ທລຍ ໄລຍະທີ 2 ທັງເປັນໄລຍະເຊື່ອມຕໍ່ລະຫວ່າງ ທລຍ ໄລຍະທີ 2 ແລະ ໄລຍະທີ 3. ສິ່ງທ້າທາຍອັນໜຶ່ງຂອງ ທລຍ ໃນໄລຍະນີ້ແມ່ນການເອົາໃຈໃສ່ຈັດຕັ້ງປະຕິບັດໂຄງການ ທລຍ 2 ໃຫ້ສໍາເລັດຢ່າງສົມບູນແບບ ເພື່ອປ້ອງກັນຄວາມລ່າຊ້າໃນການຈັດຕັ້ງປະຕິບັດໂຄງການ ທລຍ ໄລຍະທີ 3 ເຊິ່ງຈະເລີ່ມໃນປີ 2017 ນີ້. ສໍາລັບການກະກຽມໂຄງການຮອບວຽນທີ 13, ປະຈຸບັນແມ່ນໄດ້ຕິດຕາມ ແລະ ສັງລວມຈໍານວນ ແລະ ງົບປະມານຂອງໂຄງການ ຄາດວ່າຈະໄດ້ສິ່ງໜັງສືຂໍອະນຸມັດການຈັດຕັ້ງປະຕິບັດພາຍໃນເດືອນ ກຸມພາ 2016. ສະນັ້ນ, ລາຍລະອຽດຂອງໂຄງການ ແລະ ງົບປະມານແມ່ນຈະໄດ້ລາຍງານໃນເດືອນຕໍ່ໄປ.

ສໍາລັບການກະກຽມວຽກງານ ທລຍ 3 ແມ່ນໄດ້ດໍາເນີນໄປຄຽງຄູ່ກັບຄວາມຊຸ່ນຊ້ຽວຂອງການຈັດຕັ້ງວຽກງານໄລຍະສຸດທ້າຍຂອງ ທລຍ 2 ເຊິ່ງຈະມີຈໍານວນຫຼາຍກວ່າ 500 ໂຄງການຍ່ອຍທີ່ຈະໄດ້ຮັບການອະນຸມັດ ແລະ ຈະໃຊ້ທຶນເປັນຢ່າງນ້ອຍ 13 ລ້ານໂດລາສະຫະລັດ. ສໍາລັບ ທລຍ 3 ຕາມຕົວເລກທີ່ຜູ້ໃຫ້ທຶນສະເໜີມາແລ້ວ ແມ່ນຈະໄດ້ທຶນຈາກສາກົນຈໍານວນ 45 ລ້ານໂດລາສະຫະລັດ (30 ລ້ານ ຈາກທະນາຄານໂລກ ແລະ 15 ລ້ານຈາກສະວິດເຊີແລນ). ເພື່ອຮັບປະກັນການຄວບຄຸມດ້ານເນື້ອທີ່ ແລະ ກິດຈະກໍາ, ມີຄວາມຈໍາເປັນທີ່ລັດຖະບານຕ້ອງໄດ້ມີທຶນສົມທົບເປັນຢ່າງນ້ອຍ 10 ລ້ານໂດລາ ຄືກັບການຈັດຕັ້ງປະຕິບັດວຽກງານ ທລຍ 2. ສໍາລັບຂອບເຂດຂອງການຈັດຕັ້ງປະຕິບັດແມ່ນຈະອີງໃສ່ລະດັບຄວາມທຸກຍາກ ຕາມບູລິມະສິດຂອງລັດຖະບານ. ສ່ວນປະເພດກິດຈະກໍາ ແມ່ນຈະສືບຕໍ່ດ້ານພື້ນຖານໂຄງລ່າງ ໄປຄຽງຄູ່ວຽກງານປັບປຸງຊີວິດການເປັນຢູ່ ເຊື່ອສານໂພຊະນາການ.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 *ຮອບວຽນ 12 (ສົກປີ 2014-2015)*

ສໍາລັບຮອບວຽນ 12 (ສົກປີ 2014-2015) ມີຈໍານວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈໍານວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສໍາເລັດແລ້ວ 100% ມີ 399 ໂຄງການເທົ່າກັບ 91%, ຄວາມຄືບໜ້າຫລາຍກວ່າ 50% ມີ 30 ໂຄງການ, ໜ້ອຍກວ່າ 50% ມີ 6 ໂຄງການ ສ່ວນທີ່ເຫລືອ 3 ໂຄງການແມ່ນກໍາລັງກະກຽມເພື່ອຈັດຕັ້ງປະຕິບັດດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 55 | 2 | 1 | 1 |
| ສາລະວັນ | 31 | 22 | 9 | 0 | 0 |
| ຊຽງຂວາງ | 42 | 42 | 0 | 0 | 0 |
| ຜົ້ງສາລີ | 25 | 17 | 6 | 2 | 0 |
| ຫລວງນ້ຳທາ | 21 | 20 | 1 | 0 | 0 |
| ຫົວພັນ | 124 | 124 | 0 | 0 | 0 |
| ຫຼວງພະບາງ | 48 | 42 | 4 | 2 | 0 |
| ອຸດົມໄຊ | 50 | 45 | 3 | 0 | 2 |
| ອັດຕະປື | 18 | 15 | 2 | 1 | 0 |
| ເຊກອງ | 20 | 17 | 3 | 0 | 0 |
| ລວມ | **438** | **399** | **30** | **6** | **3** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມັງກອນ 2016*

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 39 | 1 | 1 | 0 |
| ຄົມມະນາຄົມ | 75 | 68 | 7 | 0 | 0 |
| ສາທາລະນະສຸກ | 25 | 23 | 2 | 0 | 0 |
| ສຶກສາ | 165 | 148 | 11 | 4 | 2 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 130 | 120 | 9 | 1 | 0 |
| ພະລັງງານ ແລະ ບໍ່ແຮ່ | 2 | 1 | 0 | 0 | 1 |
| ລວມ | **438** | **399** | **30** | **6** | **3** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມັງກອນ 2016*

ຕາຕະລາງ 3. ທຶນສົມທົບລັດຖະບານຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 15 | 15 | 0 | 0 | 0 |
| ສາລະວັນ | 12 | 8 | 4 | 0 | 0 |
| ຊຽງຂວາງ | 13 | 13 | 0 | 0 | 0 |
| ຫົວພັນ | 21 | 21 | 0 | 0 | 0 |
| ອັດຕະປື | 10 | 7 | 2 | 1 | 0 |
| ເຊກອງ | 3 | 3 | 0 | 0 | 0 |
| ລວມ | **74** | **67** | **6** | **1** | **0** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມັງກອນ 2016*

ຕາຕະລາງ 4. ທຶນສົມທົບລັດຖະບານຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 9 | 9 | 0 | 0 | 0 |
| ຄົມມະນາຄົມ | 6 | 4 | 2 | 0 | 0 |
| ສາທາລະນະສຸກ | 8 | 8 | 0 | 0 | 0 |
| ສຶກສາ | 26 | 22 | 3 | 1 | 0 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 24 | 23 | 1 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 1 | 1 | 0 | 0 | 0 |
| ລວມ | **74** | **67** | **6** | **1** | **0** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມັງກອນ 2016*

## 1.2. <u>ຮອບວຽນ 11 (ສົກປີ 2013-2014)</u>

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກັນຍາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 329 ໂຄງການ (99%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ຈຳນວນທີ່ຍັງເຫຼືອ 4 ໂຄງການ ທັງໝົດແມ່ນມີຄວາມຄືບໜ້າຫລາຍກວ່າ 50% ຄາດວ່າຈະສຳເລັດໃນມໍ່ໆ ນີ້.

ຈາກຕາຕະລາງຂ້າງລຸ່ມນີ້ 4 ໂຄງການທີ່ບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 5. ໂຄງການທີ່ຫຼ້າຊ້າໃນຮອບວຽນ 11

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ແຂວງ ອັດຕະປື | ພູວົງ | ວົງສຳພັນ | ຄຳວົງສາ | 80 |
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສົມບູນ | ພູຍາງ | 90 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ນາແລ | ພູຫຼວງ | ພູຫຼວງມີກຈີງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ລອງ | ບວກບໍ່ (ຈ່າໃໝ່ ) | ແສນຈູມປ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມັງກອນ 2016*

ສາຍເຫດຂອງການລ່າຊ້າສ່ວນໃຫຍ່ເກີດຈາກຂັ້ນຕອນການຈັດຕັ້ງປະຕິບັດຂອງຜູ້ຮັບເໝົາ ເນື່ອງຈາກພື້ນທີ່ສ່ວນໃຫຍ່ຢູ່ຫ່າງໄກຊອກຫຼີກ ເຮັດໃຫ້ການສົ່ງວັດສະດຸຫຼ້າຊ້າ ແລະ ບາງໂຄງການແມ່ນມີຄວາມຈຳເປັນທີ່ຈະຕ້ອງນຳເຂົ້າວັດສະດຸຈາກຕ່າງປະເທດເຮັດໃຫ້ເກີດຄວາມຊັກຊ້າ ເຮັດໃຫ້ເກີດຄວາມຊັກຊ້າເນື່ອງຈາກຈະຕ້ອງໄດ້ກວດວັດສະດຸຢ່າງເຂັ້ມງວດກ່ອນນຳເຂົ້າ.

## 2. ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ມັງກອນ 2016 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 100% ເທົ່າກັບ 61,114,300,917 ກີບ, ຮອບວຽນ 10 ເບີກຈ່າຍໄປແລ້ວ 79,066,028,979 ກີບ ເທົ່າກັບ 99.9% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ 76,497,180,509ກີບ ຫລື ເທົ່າກັບ 98.8% ຂອງງົບປະມານທັງໝົດ ແລະ ສຳລັບຮອບວຽນ 12 ງົບປະມານທັງໝົດ 82,634,391,216ກີບ ເບີກຈ່າຍໄປແລ້ວ 71,492,665,679 ກີບ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 6. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 61,114,300,917 | 0 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 79,066,028,979 | 59,222,323 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 329 | 76,497,180,509 | 950,644,058 |
| ຮອບວຽນ 12 (2014-2015) | 438 | 82,634,391,216 | 399 | 71,492,665,679 | 11,141,725,536 |
| **ລວມ** | **1,426** | **300,321,768,002** | **1,381** | **288,170,176,084** | **12,151,591,917** |

| ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016) | | | | | |
|---|---|---|---|---|---|
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ | ຈ/ນ ກໍ່ສ້າງ ສຳເລັດ 100% | ການເບີກຈ່າຍ ງົບປະມານ | ຮອບວຽນ (ສົກປີ) |
| ຮອບວຽນ 13 (ສົກປີ 2015-2016) | 515[1] | 13 ລ້ານໂດລາສະຫະລັດ | - | (ຍັງບໍ່ໄດ້ເບີກຈ່າຍ) ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງ ແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ຕຸລາ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ. | ຮອບວຽນ 13 (ສົກປີ 2015-2016) |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ມັງກອນ 2016*

## 3. ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ

- **ວຽກງານພັດທະນາຊຸມຊົນ**

- ສຳເລັດການວາງແຜນພັດທະນາກຸ່ມ ແລະ ຂັ້ນເມືອງ ຂອງ 3 ເມືອງ CDD ໃຫມ່ ຄື່ເມືອງ ຊຽງຄໍ້, ເມືອງຫົວເມືອງ ແຂວງຫົວພັນ ແລະ ເມືອງທ່າປາງທອງ ແຂວງສະຫວັນນະເຂດ ລວມມີ 3 ເມືອງ 19 ກຸ່ມບ້ານ.
- ໄດ້ລົງແນະນຳໃຫ້ຊຸມຊົນສຳລັບ 5 ເມືອງທົດລອງ CFA ກ່ຽວກັບການສ້າງແຜນຕາຕະລາງຂອງຊຸມຊົນໃນການປະກອບສ່ວນແຮງງານ ແລະ ແຮງງານທີ່ຕ້ອງໄດ້ຈ່າຍຄ່າທົດແທນ ແລະ ຕາຕະລາງການລົງກວດກາການກໍ່ສ້າງຂອງທີມງານຂັ້ນບ້ານ.
- ສຳເລັດສັງລວມຂໍ້ມູນຜູ້ປະສານງານກຸ່ມບ້ານປະຈຳຮອບວຽນ 13, ເພື່ອວິເຄາະສະມາຊິກຍິງຊາຍ ແລະ ຊົນເຜົ່າ ພ້ອມທັງລະດັບຄວາມອາດສາມາດຂອງຜູ້ປະສານງານກຸ່ມບ້ານໃນແຕ່ລະເມືອງ.
- ໄດ້ຮ່າງແຜນດຳເນີນວຽກງານພັດທະນາຄວາມອາດສາມາດ ໃຫ້ແກ່ຜູ້ປະສານງານກຸ່ມບ້ານໃນຮອບວຽນ 13, ໃຫ້ຜູ້ປະສານງານກຸ່ມບ້ານ ເພື່ອສ້າງໃຫ້ເປັນນັກພັດທະນາໃນຂັ້ນຊຸມຊົນຕໍ່ໄປໃນອະນາຄົດ.
- ຕິດຕາມຊຸກຍູ້ ການກະຈາຍຂໍ້ມູນຂ່າວສານຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນຊຸມຊົນເປັນປົກກະຕິ.
- ສຳເລັດການເຜີຍແຜ່ຂໍ້ມູນ-ຂ່າວສານຜ່ານວິທະຍຸແຫ່ງຊາດ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ ລວມມີ 2 ຫົວຂໍ້ຂ່າວ:

[1] ແມ່ນຕົວເລກວາງແຜນຂັ້ນເມືອງ ອາດຈະມີການປັບປຸງແປງຫຼັງຈາກສຳຫຼວດອອກແບບ ແລະ ອະນຸມັດຈາກຜູ້ໃຫ້ທຶນ

- ທລຍ ຈັດກອງປະຊຸມປຶກສາຫາລືແລກປ່ຽນບົດຮຽນການຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ເຊື່ອມສານໂພຊະນາການ
- ທລຍ ໃຊ້ງົບປະມານ 21 ຕື້ ກວ່າກີບ ເຂົ້າໃນການພັດທະນາໂຄງລ່າງ ແຂວງ ສາລະວັນ

▪ <u>ວຽກງານວິສະວະກຳ ແລະ ວິຊາການ</u>

- ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ ແລະ ການລົງທຶນ.
- ສືບຕໍ່ຕິດຕາມໂຄງການຍ່ອຍຮອບວຽນ 11 ແລະ 12 ແລະ ສືບຕໍ່ເຮັດວຽກຮ່ວມກັບອົງການແຮງງານສາກົນ (ILO).
- ສືບຕໍ່ສຳຫຼວດອອກແບບໂຄງການຍ່ອຍທີ່ເປັນທຶນສົມທົບຕ່າງປະເທດ ຂອງຮອບວຽນ 12.
- ສຳເລັດຕິດຕາມຄຸນະພາບໂຄງການ ກໍ່ສ້າງທາງໃນຮອບວຽນ 11 ຮ່ວມກັບຊ່ຽວຊານທະນາຄານໂລກ.
- ດຳເນີນການຮ່ວມມືກັບມະຫາວິທະຍາໄລຈຳປາສັກ ເພື່ອເອົານັກສຶກສາປີສຸດທ້າຍ ລົງກວດກາຄຸນະພາບໂຄງການຍ່ອຍຮອບວຽນ 12 ແຂວງ ສາລະວັນ ແລະ ແຂວງ ເຊກອງ.
- ສຳເລັດຝຶກອົບຮົມການຈັດຕັ້ງປະຕິບັດໂດຍຊຸມຊົນ ແລະ ສຳເລັດການຝຶກອົບຮົມຜູ້ອຳນວຍຄວາມສະດວກດ້ານວຽກງານຊຸມຊົນເປັນເຈົ້າທາງສຸຂະອະນາໄມຢູ່ 4 ແຂວງພາກໃຕ້.
- ສຳເລັດການຈັດກອງປະຊຸມ ທົບທວນຄືນດ້ານວິຊາການ ຂອງພະແນກວິສະວະກຳ.

▪ <u>ວຽກງານຕິດຕາມ-ປະເມີນຜົນ</u>

- ໄດ້ຮ່ວມກັນປຶກສາຫາລືເພື່ອອອກແບບຕົວຊີ້ວັດຂອງໂຄງການ ທລຍ ໄລຍະທີ 3 ເພື່ອສົ່ງໃຫ້ລັດຖະບານ ແລະ ຜູ້ໃຫ້ທຶນພິຈາລະນາຕາມຄວາມເໝາະສົມໃນຂັ້ນຕໍ່ໄປ.
- ຕິດຕໍ່ກັບຄະນະຮັບຜິດຊອບໃນຫ້ອງການ ທລຍ ທັງໝົດ 10 ແຂວງ ເພື່ອສັງລວມລາຍລະອຽດຂອງໂຄງການທັງໝົດຂອງຮອບວຽນ 13 ເພື່ອກະກຽມການຈັດຕັ້ງປະຕິບັດໃຫ້ທັນຕາມກຳນົດເວລາ.
- ສະຫຼຸບຕີລາຄາຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍ ຮອບວຽນ 13 ພາຍໃຕ້ທຶນສົມທົບລັດຖະບານເຫັນໄດ້ວ່າທຸກໂຄງການໄດ້ຮັບການສຳຫຼວດ-ອອກແບບເປັນທີ່ຮຽບຮ້ອຍແລ້ວ ແລະ ຈຳນວນໜຶ່ງແມ່ນໄດ້ເລີ່ມການຈັດຕັ້ງປະຕິບັດແລ້ວ.
- ໄດ້ຕິດຕາມການນຳໃຊ້ລະບົບຖານຂໍ້ມູນທີ່ໄດ້ປັບປຸງ ແລະ ຝຶກອົບຮົມໃຫ້ພະນັກງານຂັ້ນແຂວງ ແລະ ເມືອງ ເພື່ອຮັບປະກັນປະສິດທິພາບໃນການນຳໃຊ້.
- ສົ່ງບົດລາຍງານຄວາມຄືບໜ້າຜົນໄດ້ຮັບຂອງໂຄງການປະຈຳປີ ສະບັບພາສາອັງກິດທີ່ໄດ້ກວດແກ້ແລ້ວໃຫ້ຜູ້ໃຫ້ທຶນເພື່ອໃຫ້ຄຳເຫັນ ແລະ ຮັບຮອງ.

- <u>ວຽກງານບໍລິຫານ - ການເງິນ</u>

- ສໍາເລັດການເບີກຖອນເງິນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານຮອບວຽນ 12, ຈໍານວນ 7 ໂຄງການແຂວງອັດຕະປື.
- ສໍາເລັດການປິດສະຫລຸບບັນຊີປະຈໍາເດືອນ ທັນວາ 2015, ສໍາລັບສົກປີ 2015-2016.
- ສົ່ງເອກະສານຄ່ຽນເງິນບ້ວງບໍລິຫານປະຈໍາເດືອນ ຕຸລາ 2015 ປະມານ 546,000 ໂດລາ, ໃຫ້ຄັງເງິນແຫ່ງຊາດ.
- ສືບຕໍ່ກະກຽມຂໍ້ມູນສໍາລັບການເຮັດບົດລາຍງານປະຈໍາໄຕມາດ 01, ສໍາລັບສົກປີ 2015-2016 ໃຫ້ຜູ້ໃຫ້ທຶນ.

- <u>ວຽກງານຈັດຕັ້ງ</u>

- ປະສານງານກັບຫົວໜ້າພະແນກ ແລະ ໜ່ວຍງານ ເພື່ອທົບທວນພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງບາງຕໍາແໜ່ງທີ່ມີຄວາມຈໍາເປັນ: ໄດ້ຜ່ານພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ (ຂັ້ນເມືອງ, ບ້ານ), ວິສະວະກອນຂັ້ນແຂວງ ແລະ ຂັ້ນເມືອງ ໃນກອງປະຊຸມຝຶກອົບຮົມວຽກງານຂອງແຕ່ລະພາກສ່ວນ ທີ່ຈັດຂຶ້ນໃນລະຫວ່າງວັນທີ 18-22 ມັງກອນ, 2016 ທີ່ນະຄອນຫລວງວຽງຈັນ.
- ສືບຕໍ່ສັງລວມຄໍາເຫັນ ແລະ ການພິຈາລະນາສຸດທ້າຍ ກ່ຽວກັບການຕໍ່ສັນຍາຂອງພະນັກງານແຕ່ລະຄົນ: ໄດ້ສໍາເລັດ ແລະ ມີຂໍ້ຕົກລົງກ່ຽວກັບການຕໍ່ສັນຍາປີ 2016 ຂອງພະນັກງານບຸກຄົນພິເສດ.
- ກະກຽມສັນຍາພະນັກງານ ປະຈໍາປີ 2016: ມາຮອດປະຈຸບັນໄດ້ສໍາເລັດ 80% ຍັງເຫລືອພຽງຂອດການຈັດສົ່ງສັນຍາໃຫ້ພະນັກງານ ໂດຍສະເພາະພະນັກງານຢູ່ຕ່າງແຂວງ.
- ປະສານງານກ່ຽວກັບການຈັດກອງປະຊຸມປຶກສາຫາລື ເພື່ອຄົ້ນຄວ້າເອກະສານຄຸ້ມຄອງບໍລິຫານບຸກຄະລາກອນ: ກອງປະຊຸມສໍາມະນາດັ່ງກ່າວ ໄດ້ຈັດຂຶ້ນໃນວັນທີ 15 ມັງກອນ 2016 ທີ່ໂຮງແຮມເມີຄິວ.
- ກະກຽມເອກະສານ ເພື່ອໃຫ້ໜ່ວຍງານກວດສອບພາຍໃນກວດກາວຽກງານຈັດຕັ້ງ: ໄດ້ສໍາເລັດ ແລະ ມີການກວດສອບເປັນທີ່ຮຽບຮ້ອຍແລ້ວ.
- ກະກຽມການນໍາສະເໜີວຽກງານນະໂຍບາຍ ແລະ ຈັດຕັ້ງຂອງ ທລຍ ໃຫ້ແກ່ພະນັກງານປັບປຸງຊີວິດການເປັນຢູ່ເຊື່ອມສານໂພຊະນາການ ໃນຊຸດຝຶກອົບຮົມຄັ້ງວັນທີ 18-22 ມັງກອນ 2016 ທີ່ ສູນກາງ: ໄດ້ຈັດຕັ້ງປະຕິບັດ ແລະ ມີຜົນສໍາເລັດຕາມຄາດໝາຍ.
- ກະກຽມການປະເມີນ ແລະ ຄັດເລືອກພະນັກງານຂັບລົດ ຂັ້ນສູນກາງ: ໄດ້ສໍາເລັດການທົດສອບ ແລະ ຄັດເລືອກ, ຜູ້ກ່ຽວຈະໄດ້ເລີ້ມວຽກໃນວັນທີ 08 ກຸມພາ 2016 ເປັນຕົ້ນໄປ.
- ສໍາເລັດການຄັດເລືອກພະນັກງານ: ວິສະວະກໍາ ເມືອງ ໃໝ່,  ຜົ້ງສາລີ, ປະສານງານຂັ້ນບ້ານ ໂພຊະນາການ ຫົວເມືອງ ແລະ ພັດທະນາຊຸມຊົນເມືອງນອງ. ເຊິ່ງທຸກຕໍາແໜ່ງ ແມ່ນຈະເລີ້ມວຽກໃນຕົ້ນເດືອນ ກຸມພາ 2016.

- **ວຽກງານຈັດຊື້-ຈັດຈ້າງ**

- ເປີດຊອງປະມູນສຳລັບການປະມູນການຈັດຊື້ລົດກະບະຈຳນວນ 5 ຄັນ ຕາມແຜນຈັດຊື້.
- ເຂົ້າຮ່ວມເປັນກຳມະການກວດກາຊັບສິນຂອງ ທລຍ ແຂວງຫົວພັນ, ຊຽງຂວາງ, ຫລວງນ້ຳທາ, ສະຫວັນນະເຂດ, ສາລະວັນ, ເຊກອງ, ແລະ ອັດຕະປື.
- ຕິດຕາມການເປີດຊອງປະມູນ ແລະ ເຮັດສັນຍາ ສຳລັບໂຄງການຍ່ອຍ ບ້ວງທືນສົມທົບຂອງລັດຖະບານ ງວດທີ 1
- ສຳເລັດການກະກຽມຮ່າງແຜນງົບປະມານແລະ ແຜນຈັດຊື້-ຈັດຈ້າງ ຂອງ ທລຍ ສູນກາງ ສຳລັບໂຄງການ ທລຍ 3.
- ກະກຽມລາຍການວຽກ ແລະ ດັດແກ້ສັນຍາການວ່າຈ້າງບໍລິສັດທີ່ປຶກສາກວດສອບພາຍນອກ ເພື່ອມາກວດສອບໂຄງການປັບປຸງຊີວິດການເປັນຢູ່ ແລະ ໂຄງການ ທລຍ.
- ກວດກາງົບປະມານຈັດຝຶກອົບຮົມວຽກງານບໍລິຫານການເງິນ ແລະ ວຽກງານຈັດຊື້-ຈັດຈ້າງ ແລະ ງົບປະມານເປີດຊອງປະມູນໂຄງການຍ່ອຍ ບ້ວງທຶນສົມທົບຂອງລັດຖະບານງວດທີ່ 2 ແລະ ທຶນຂອງທະນາຄານໂລກ ສົກປີ 2015-2016 ສຳລັບແຂວງສະຫວັນນະເຂດ
- ກະກຽມເອກະສານປະມູນໂຄງການຍ່ອຍຂອງແຂວງສະຫວັນນະເຂດ, ສາລະວັນ ເຊກອງ ແລະ ອັດຕະປື
- ກະກຽມເອກະສານປະມູນຈັດຊື້ທີ່ດຳເນີນການຈັດຊື້ຢູ່ຫ້ອງການ ທລຍ ສູນກາງ ໃຫ້ໜ່ວຍງານກວດສອບພາຍໃນ

- **ວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ**

ການທ້ອນເງິນໃນເດືອນ 1/2016 ໃນ 4 ເມືອງ ຄື ເມືອງຣ້ຽມ, ເມືອງຊ່ອນ (ແຂວງຫົວພັນ) ແລະ ເມືອງ ເຊໂປນ ແລະ ເມືອງນອງ (ແຂວງສະຫັວນນະເຂດ) ມີ 85 ບ້ານ, 306 ກຸ່ມ, ສະມາຊິກທັງໝົດມີ 4,246 ຄົນ,ຍິງມີ 3,145 ຄົນ, ເງິນຝາກທັງໝົດໃນເດືອນ 1/2016 ນີ້ ມີ: 11.010.000.ກີບ ແລະ ລວມຍົກຍອດມາທັງໝົດມີ : 308.312.000 ກີບ.ດັ່ງຕາຕະລາງຂ້າງລຸ່ມນີ້:

**ຕາຕະລາງ 7. ສະຫຼຸບການທ້ອນເງິນ**

| ລ/ດ | ຊື່ ເມືອງ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈ/ນ ສະມາຊິກ | ຈ/ນ ຜູ້ຍິງ | ຈ/ນ ຍົກຍອດມາ 12/2015 | ຈ/ນ ເງິນທ້ອນ ເດືອນ 1/2016 | ຈ/ນ ເງິນທ້ອນຍົກຍອດ ມາຮອດເດືອນ 1 ປີ 2016 |
|---|---|---|---|---|---|---|---|---|
| 1 | ມ. ຣ້ຽມ | 20 | 67 | 978 | 576 | 107,854,000 | 3,576,000 | 111,430,000 |
| 2 | ມ. ຊ່ອນ | 20 | 68 | 1,018 | 615 | 48,760,000 | 2,036,000 | 50,796,000 |
| 3 | ມ. ເຊໂປນ | 30 | 104 | 1,284 | 1,000 | 102,684000 | 3,329,000 | 106,013,000 |
| 4 | ມ. ນອງ | 15 | 67 | 966 | 954 | 38,004,000 | 2,069,000 | 40,073,000 |
| ລວມທັງໝົດ: | | 85 | 306 | 4,246 | 3,145 | 297,302,000 | 11,010,000 | 308,312,000 |

*ແຫຼ່ງຂໍ້ມູນ: ໜ່ວຍງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ, ທລຍ, 31 ມັງກອນ 2016*

ສຳລັບວຽກງານດ້ານໂພຊະນາການໃນ 1 ເດືອນຜ່ານມາໄດ້ມີການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວເປັນປົກກະຕິຢູ່ແຕ່ລະສະໂມສອນໂພຊະນາການຂອງແຕ່ລະເມືອງໂດຍນຳໃຊ້ງົບປະມານທີ່ຍັງເຫລືອຢູ່ແຕ່ລະສະໂມສອນຍອັນວ່າງົບປະມານມີພຽງພໍສຳລັບການເຄື່ອນໄຫວວຽກງານດັ່ງກ່າວໄດ້ສະດວກສະບາຍ. ວຽກທີ່ປະຕິບັດໃນເດືອນນີ້ມີຢູ່ 4 ກິດຈະກຳຫລັກເຊັ່ນ: 1 -ການປຸງແຕ່ງອາຫານການເວັນ; 2- ໂພຊະນາສຶກສາ ; 3 - ໂພຊະນາການ ແມ່ ແລະ ເດັກ ; 4 - ກິດຈະກຳສອນຄືວ.ສ່ວນການໃຫ້ອາຫານເສີມ ແຕ່ລະສະໂມສອນໂພຊະນາການແມ່ນໃຫ້ 3 ເທື່ອ ຕໍ່ 1 ອາທິດ ໃນນັ້ນແມ່ນສະມາຊິກສະໂມສອນໄດ້ປະກອບວັດຖຸດິບເຊັ່ນ: ເຂົ້າສານ, ປະເພດຜັກ, ຫົວມັນ, ໝາກອື ແລະ ເຄື່ອງປາຂອງດິງປະເພດຕ່າງໆອີກດ້ວຍ. ໃນນັ້ນມີຜູ້ເຂົ້າຮ່ວມໃນການປຸງແຕ່ງອາຫານການເວັນລວມທັງໝົດມີ: ແມ່ມານ ມີ 464 ເທື່ອຄົນ. ແມ່ລູກອ່ອນມີ: 436 ເທື່ອຄົນ. ເດັກ 6-24 ເດືອນມີ 935 ເທື່ອຄົນ. ຮ່ວມອາຫານການເວັນມີ 2,757 ເທື່ອຄົນ.ຜູ້ທຸກຍາກມີ 111 ເທື່ອຄົນ.

## 4. ແຜນວຽກສຳລັບເດືອນ ພະຈິກ 2015

- **ວຽກງານພັດທະນາຊຸມຊົນ**

- ຈັດຊຸດຝຶກອົບຮົມການວາງແຜນພັດທະນາຂັ້ນບ້ານ, ຂັ້ນກຸ່ມບ້ານ ແລະ ຂັ້ນເມືອງ ຮູບແບບ ຕິດຕາມການວາງແຜນພັດທະນາຂັ້ນກຸ່ມບ້ານ ແລະ ຂັ້ນເມືອງ ຮູບແບບ CDD ໃຫ້ກັບພະນັກງານພັດທະນາຊຸມຊົນຂັ້ນແຂວງ ແລະ ເມືອງ ເພື່ອການວາງແຜນພັດທະນາ ຮອບວຽນ 14.
- ລົງຕິດຕາມການປະກອບສ່ວນຂອງຊຸມຊົນ ແລະ ການຈັດຕັ້ງປະຕິບັດການກໍ່ສ້າງໂຄງການຍ່ອຍ ຮູບແບບ CFA ຢູ່ 5 ເມືອງທົດລອງ ກັບທີມງານ ການເງິນ, ວິສະວະກຳ, ຈັດຊື້-ຈັດຈ້າງ ແລະ ຕິດຕາມປະເມີນຜົນ.
- ກະກຽມເຄື່ອງມືກ່ຽວກັບ ວຽກງານ ສົ່ງເສີມສິດສະເໝີພາບຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ , ວຽກງານການປ້ອງກັນຜົນກະທົບທາງສັງຄົມ, ການຈັດຕັ້ງຄະນະກວດສອບຂັ້ນບ້ານ ເພື່ອເຂົ້າຮ່ວມການຮຽນການສອນໃນຊຸດຝຶກອົບຮົມກ່ຽວກັບ ການວາງແຜນພັດທະນາບ້ານ, ກຸ່ມບ້ານ ທີ່ຈະຈັດຕັ້ງປະຕິບັດໃນຮອບວຽນ 14.
- ສັງລວມຂໍ້ມູນ ເພື່ອວິເຄາະຂໍ້ມູນແຍກເພດ ແລະ ຜູ້ດ້ອຍໂອກາດໃນຄະນະທີມງານຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ.
- ກະກຽມພະລິດຄູ່ມື ນະໂຍບາຍດ້ານຊົນເຜົ່າ ພາລາວ-ອັງກິດ, ນະໂຍບາຍການຍົກຍ້າຍຖິ່ນຖານ ແລະ ທົດແທນຄືນ ພາສາລາວ-ອັງກິດ, ນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມ ພາສາລາວ-ອັງກິດ, ປື້ມລາຍງານການປະເມີນຄວາມຍືນຍົງຂອງໂຄງການຍ່ອຍ ທລຍ (ພາສາລາວ-ອັງກິດ), ບົດລາຍງານປະຈຳປີ 2015 ຂອງ ທລຍ 2, ປື້ມຜົນງານ 13 ປີຂອງ ທລຍ, ຮູບພາບແຜ່ນໃຫຍ່ ແລະ ແຜ່ນສາກວາງສະແດງ.
- ຕິດຕາມຊຸກຍູ້ ການກະຈາຍຂໍ້ມູນຂ່າວສານຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນຊຸມຊົນເປັນປົກກະຕິ.

- **<u>ວຽກງານວິສະວະກຳ</u>**

- ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ.
- ສືບຕໍ່ສຳຫລວດໂຄງການຍ່ອຍ IDA ຮອບວຽນທີ 13.
- ຕິດຕາມນັກສຶກສາປີສຸດທ້າຍທີ່ມາກວດກາໂຄງການຍ່ອຍຢູ່ແຂວງ ສາລະວັນ ແລະ ແຂວງ ເຊກອງ.
- ລົງກວດກາເອະສານດ້ານສະພາບແວດລ້ອມ ແລະ ໂຄງການຍ່ອຍ ທີ່ພົວພັນກັບປ່າສະຫງວນ ຢູ່ເມືອງວຽງທອງ, ແຂວງ ຫົວພັນ ຮ່ວມກັບຊ່ຽວຊານຈາກທະນາຄານໂລກ.
- ປັບປຸງແບບມາດຕະຖານການກໍ່ສ້າງ ແລະ ແບບຟອມເກັບກຳຂໍ້ມູນດ້ານປະລິມານ ໃຫ້ເປັນເອກະພາບກັນໃນການນຳໃຊ້ເຂົ້າໃນໂຄງການຍ່ອຍຮອບວຽນທີ 13.
- ກະກຽມ ແລະ ຂຶ້ນແຜນງົບປະມານ ໃນວຽກການກວດກາ ແລະ ຕິດຕາມໂຄງການຊຸມຊົນເປັນເຈົ້າການດ້ານສຸຂະອະນາໄມ ໃນ 4 ແຂວງພາກໃຕ້.

- **<u>ວຽກງານຕິດຕາມ-ປະເມີນຜົນ</u>**

- ລົງເຮັດວຽກພາກສະໜາມເພື່ອຊີ້ນຳພະນັກງານຂັ້ນແຂວງ ແລະ ເມືອງ ກ່ຽວກັບການນຳໃຊ້ລະບົບຖານຂໍ້ມູນ ແລະ ວຽກງານກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂປັນຫາ.
- ຕິດຕາມການນຳສະເໜີຜົນໄດ້ຮັບຂອງການປະເມີນຜົນກະທົບໄລຍະທ້າຍໂຄງການ ທລຍ 2 (Endline Survey) ເພື່ອຕີລາຄາຜົນໄດ້ຮັບ 5 ປີ ແລະ ປະສິດທິພາບຂອງໂຄງການ ເຊິ່ງລາຍລະອຽດຈະໄດ້ລາຍງານໃນເດືອນ ມີນາ 2016.
- ກະກຽມບົດນຳສະເໜີ ເພື່ອອອກແບບລະບົບຖານຂໍ້ມູນຂອງໂຄງການ ໄລຍະທີ 3 ອີງຕາມຮູບແບບຂອງ ທລຍ 2 ເພື່ອເຮັດໃຫ້ຮັດກຸມ ແລະ ມີປະສິດທິພາບຍິ່ງຂຶ້ນ.
- ຈັດພິມບົດລາຍງານຜົນໄດ້ຮັບ 13 ປີ ຂອງໂຄງການ ແລະ ບົດລາຍງານປະຈຳປີ ສົກປີ 2014-2015 ສະບັບພາສາອັງກິດ ເພື່ອແຈກຢາຍໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ຜູ້ໃຫ້ທຶນ ແລະ ອົງການພັດທະນາຕ່າງໆໃນ ສປປ ລາວ.

- **<u>ວຽກງານບໍລິຫານ-ການເງິນ</u>**

- ກະກຽມບົດລາຍການເງິນປະຈຳເດືອນ ມັງກອນ 2016.
- ກະກຽມຄ່ຽນເງິນປະຈຳເດືອນທັນວາ 2015 ບ້ວງເງິນ IDA 56770 ຈາກທະຄານໂລກ.
- ຕິດຕາມການອະນຸມັດການຄ່ຽນເງິນປະຈຳເດືອນ ພະຈິກ 2015, ຈາກທະນາຄານໂລກ.

- ກະກຽມການຈັດຝຶກອົບຮົມທົບທວນຄືນວຽກງານບໍລິຫານ-ການເງິນໃຫ້ກັບພະນັກງານແຂວງ ແລະ ເມືອງ ທີ່ສູນກາງ 16-19 ກຸມພາ 2016.
- ກະກຽມຄ່ຽນເງິນໂຄງການຍ່ອຍຮອບວຽນ 12, ສໍາລັບແຂວງສະຫວັນນະເຂດ ປະມານ 503,200 ໂດລາ, ຈາກຄັງເງິນແຫ່ງຊາດ.
- ກະກຽມບົດລາຍງານປະຈໍາໄຕມາດ 1, ສໍາລັບສົກປີ 2015-2016, ໃຫ້ຜູ້ໃຫ້ທຶນ, ກ່ອນວັນທີ 15 ກຸມພາ 2016.
- ລົງເຮັດວຽກຮ່ວມກັບກະຊວງການເງິນ, ກົມຊັບສິນ, ເພື່ອປະຕິບັດການຕີລາຄາມູນຄ່າຊັບສົມບັດທີ່ຮັບໃຊ້ວຽກງານຂອງໂຄງການ ທລຍ.
- ກະກຽມແຜນງົບປະມານ ສໍາລັບໂຄງການ ທລຍ ໄລຍະ III, ເພື່ອນໍາສະເຫນີໃຫ້ຜູ້ໃຫ້ທຶນ.
- ສັງລວມແຜນງົບປະມານຈາກທຸກພະແນກເຂົ້າໃນແຜນງົບປະມານປະຈໍາປີ 2015 – 2016 ຫລື ຮອບວຽນທີ 13.

- <u>ວຽກງານຈັດຕັ້ງ</u>

- ລົງຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຮ່ວມຊີວິດການເມືອງກັບພະນັກງານ ທລຍ ແຂວງເຊກອງ ແລະ ສາລະວັນ ໃນໄລຍະວັນທີ 09-14 ກຸມພາ 2016.
- ສືບຕໍ່ຈັດສົ່ງສັນຍາໃຫ້ພະນັກງານທົ່ວປະເທດ.
- ສືບຕໍ່ທົບທວນພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງບາງຕໍາແໜ່ງທີ່ຍັງຄ້າງ.
- ປະກາດຮັບສະໝັກ ແລະ ຄັດເລືອກພະນັກງານຕໍາແໜ່ງ: ປະສານງານຂັ້ນບ້ານໂພຊະນາການເມືອງນອງ ແລະ ຫົວເມືອງ, ພັດທະນາຊຸມຊົນເມືອງກະລຶມ, ວິສະວະກອນເມືອງລອງ.
- ຈັດກອງປະຊຸມແນະນໍາກ່ຽວກັບການຈັດຕັ້ງປະຕິບັດວຽກໃຫ້ພະນັກງານເຂົ້າໃໝ່.
- ກະກຽມຫົວຂໍ້ຝຶກອົບຮົມໃຫ້ແກ່ພະນັກງານບໍລິຫານ-ການເງິນແຂວງ ແລະ ເມືອງ ໃນລະຫວ່າງວັນທີ 16-19 ກຸມພາ.

- <u>ວຽກງານຈັດຊື້-ຈັດຈ້າງ</u>

- ດໍາເນີນຂັ້ນຕອນການກະກຽມບົດລາຍງານປະເມີນຜົນ, ຕັດສິນ ແລະ ເຊັນສັນຍາກ່ຽວກັບການປະມູນແບບເປີດກ້ວາງພາຍໃນ ສໍາລັບລົດກະບະ ຈໍານວນ 5 ຄັນ.
- ຕິດຕາມການຈັດສົ່ງກ່ຽວກັບການປະມູນຈັດຊື້ເຄື່ອງມື ກະຈາຍຂໍ້ມູນຂ່າວສານສຶກສາ ແລະ ປະຊາສໍາພັນ (IEC) ຂອງພະນັກງານອໍານວຍຄວາມສະດວກຂອງໂຄງການ ປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ.

- ຕິດຕາມການຈັດສິ່ງກ່ຽວກັບການຜະລິດເຄື່ອງມື ກະຈາຍຂໍ້ມູນຂ່າວສານສຶກສາ ແລະ ປະຊາສຳພັນ (IEC) ກ່ຽວກັບໂຄງການປັບປຸງຊີວິດການເປັນຢູ່ເຊື່ອມສານໂພສະນາການຂອງໂຄງການ ປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ.
- ຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍ ບ້ວງທຶນສົມທົບຂອງລັດຖະບານ ງວດທີ 1, ແຂວງຜົ້ງສາລີ, ຫລວງນໍ້າທາ, ອຸດົມໄຊ, ຫລວງພະບາງ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື.
- ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດໂຄງການ ສຳລັບໂຄງການຍ່ອຍ ທີ່ຈັດຕັ້ງປະຕິບັດໂຄງການໂດຍຊຸມຊົນ ສຳລັບແຂວງຫລວງພະບາງ, ແຂວງອຸດົມໄຊ ແລະ ແຂວງສະຫັວນນະເຂດ.
- ກວດກາງົບປະມານຈັດຝຶກອົບຮົມວຽກງານບໍລິຫານການເງິນ ແລະ ວຽກງານຈັດຊື້-ຈັດຈ້າງ ແລະ ງົບປະມານເປີດຊອງປະມູນໂຄງການຍ່ອຍ ບ້ວງທຶນສົມທົບຂອງລັດຖະບານ ແລະ ທຶນຂອງທະນາຄານໂລກ ສົກປີ 2015-2016 ແຂວງຫົວພັນ, ຊຽງຂວາ, ຜົ້ງສາລີ, ອຸດົມໄຊ, ຫລວງພະບາງ, ສາລະວັນ, ເຊກອງ ແລະ ອັດຕະປື.
- ຕິດຕາມການເປີດຊອງປະມູນ ແລະ ເຊັນສັນຍາໂຄງການຍ່ອຍບ້ວງທຶນສົມທົບຂອງລັດຖະບານ ແຂວງ ເຊກອງ ແລະ ແຂວງ ຜົ້ງສາລີ.

- **<u>ວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ</u>**

- ຕິດຕາມກວດກາການທ້ອນເງິນ, ການເກັບກູ້, ການປ່ອຍເງິນກູ້ໃຫ້ສະມາຊິກກຸ່ມ ກຊກ ທີ່ 4 ເມືອງໂຄງການເກົ່າ.
- ຕິດຕາມກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ກິດຈະກຳທີ່ສ້າງລາຍຮັບປະເພດຕ່າງໆ.
- ກະກຽມເອກະສານຕ່າງໆ ດ້ານຂໍ້ແນະນຳໃນການສ້າງຕັ້ງກຸ່ມ ກຊກ ແລະ ການທ້ອນເງິນໃຫ້ແກ່ເມືອງໃໝ່ ຄື : ເມືອງ ທ່າປາງທອງ, ເມືອງ ຊຽງຄໍ້ ແລະ ເມືອງຫົວເມືອງ.
- ສືບຕໍ່ປຸງແຕ່ງອາຫານກາງເວັນໃນ 15 ສະໂມສອນໂພຊະນາການ ແລະ ສືບຕໍ່ໃຫ້ຄວາມຮູ້ດ້ານສຸຂະສຶກສາ ແລະ ໂພຊະນາສຶກສາ.
- ສືບຕໍ່ຊຸກຍູ້ສິ່ງເສີມດ້ານການເຮັດສວນຄົວ ຂອງສະມາຊິກ ສະໂມສອນໂພຊະນາການ.
- ກະກຽມເອກະສານດ້ານ ໂພຊະນາສຶກສາ ແລະ ເອກະສານອື່ນໆ ທີ່ມີຄວາມຈຳເປັນ.

| ເຊັນ ທທນ. <u>ຜູ້ອຳນວຍການບໍລິຫານ ທລຍ</u> | <u>ພະແນກ ຕິດຕາມ-ປະເມີນຜົນ</u> | <u>ສັງລວມ ແລະ ລາຍງານ</u> |
|---|---|---|
| (ຕາ: ທ.ພ.ຫ.ລ ຜູ້ອຳນວຍການ ບໍລິຫານ ກອງທຶນຫລຸດຜ່ອນຄວາມທຸກຍາກ) | | |
| ບົວລີ ໄຊຍະວົງ | | |
| Boualy SAYAVONG | ດາວວຽງ ໄຊຍະຈັກ | ສິດທິເດດ ກົງວົງສາ |